UNITED NATIONS
LAO PDR

**<u>ບົດຖະແຫຼງຂ່າວ</u>**

**ກອງປະຊຸມໂຕະມົນປະຈຳປີ 2023**

**“ ເລັ່ງລັດການຈັດຕັ້ງປະຕິບັດຜົນການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ IX ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ’’**

ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ, ວັນທີ 13 ກຸມພາ 2024

.............................................................................................

**ບັນດາສື່ມວນຊົນ, ແຂກທີ່ມີກຽດ, ທ່ານຍິງ ແລະ ທ່ານຊາຍ !**

ໃນນາມປະທານກອງປະຊຸມຮ່ວມ, ຂ້າພະເຈົ້າ ມີຄວາມຮູ້ສຶກພາກພູມໃຈ ແລະ ເປັນກຽດຢ່າງຍິ່ງ ທີ່ໄດ້ມີໂອກາດ ນຳສະເໜີຕໍ່ສື່ມວນຊົນ ກ່ຽວກັບຜົນຂອງກອງປະຊຸມໂຕະມົນ ປະຈຳປີ 2023 ທີ່ໄດ້ຈັດຂຶ້ນ ຢູ່ນະຄອນຫຼວງວຽງຈັນ ໃນວັນທີ 13 ກຸມພາ 2024 ນີ້, ເຊິ່ງກອງປະຊຸມໂຕະມົນ ໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາ ແລະ ໄດ້ດຳເນີນດ້ວຍບັນຍາກາດສ້າງສັນ, ກົງໄປກົງມາ ແລະ ດ້ວຍຄວາມຮັບຜິດຊອບສູງ ຂອງຜູ້ເຂົ້າຮ່ວມກອງປະຊຸມໄດ້ສຳເລັດລົງດ້ວຍຜົນສຳເລັດອັນຈົບງາມ.

**ບັນດາທ່ານ ທີ່ນັບຖື ແລະ ຮັກແພງທັງຫຼາຍ !**

ດັ່ງທີ່ບັນດາທ່ານໄດ້ຮັບຊາບ ເພື່ອບັນລຸໄດ້ເປົ້າໝາຍ ແລະ ວາລະການພັດທະນາແຫ່ງຊາດ ລວມທັງເປົ້າໝາຍການພັດທະນາແບບຍືນຍົງ (SDG) ແລະ ການກະກຽມຄວາມພ້ອມໃນການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຂອງ ສປປ ລາວ, ລັດຖະບານແຫ່ງ ສປປ ລາວ ເວລາໃດກໍ່ໃຫ້ຄວາມສຳຄັນຕໍ່ການຮ່ວມມືກັບບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ ແລະ ກັບທຸກພາກສ່ວນ ຈຶ່ງໄດ້ຖືເອົາຂະບວນການໂຕະມົນເປັນເວທີ ແລະ ກົນໄກແຫ່ງການປຶກສາຫາລື ໃນລະດັບນະໂຍບາຍ ເພື່ອສ້າງຄວາມເຂົ້າໃຈຕໍ່ການຕີລາຄາການຈັດຕັ້ງປະຕິບັດປະຈຳປີ, ການກຳນົດທິດທາງ ແລະ ໜ້າວຽກຈຸດສຸມ ຂອງການພັດທະນາ ຢູ່ ສປປ ລາວ ໃນແຕ່ລະປີ, ເຊິ່ງປີ 2023 ນີ້ ຫົວຂໍ້ຂອງກອງປະຊຸມໂຕະມົນ ຂອງພວກເຮົາແມ່ນ: **“ ເລັ່ງລັດການຈັດຕັ້ງປະຕິບັດຜົນການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ’’**

ໃນກອງປະຊຸມຄັ້ງນີ້, ໄດ້ນຳສະເໜີເອກະສານສຳຄັນ 3 ຫົວຂໍ້ ຄື: (1) ບົດສະຫຼຸບການຈັດຕັ້ງປະຕິບັດກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX, ຍຸດທະສາດດ້ານເງິນເພື່ອສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ແລະ ຂອບການຟື້ນຟູເສດຖະກິດຂອງ ສປປ ລາວ, (2) ບົດລາຍງານແບບສະໝັກໃຈ ແຫ່ງຊາດ ຄັ້ງທີIII ແລະແຜນຍຸດທະສາດການຂ້າມຜ່ານອອກ

ຈາກສະຖານະພາບດ້ອຍພັດທະນາຢ່າງໂລ່ງລ່ຽນຂອງ ສປປ ລາວ, ວິໄສທັດຮອດ ປີ 30 ແລະທິດທາງໃນຕໍ່ໜ້າ; (3) ນໍາສະເໜີກ່ຽວກັບ ການຮ່ວມມືເພື່ອການພັດທະນາ (ການຕິດຕາມການເປັນຄູ່ຮ່ວມມືສາກົນ ຄັ້ງທີ 4 ແລະ ບົດແນະນໍາການຈັດຕັ້ງປະຕິບັດຂະບວນການໂຕະມົນ); ນອກຈາກນີ້ ທີ່ປະຊຸມຍັງໄດ້ຮັບຟັງການລາຍງານຜົນຂອງການປຶກສາຫາລືຈາກກຸ່ມສົນທະນາ ໃນສອງຫົວຂໍ້ຄື: (1) ສະພາບເສດຖະກິດ ແລະ ທິດທາງການເຕີບໂຕເພື່ອຄວາມຍືນຍົງ ແລະ ສີຂຽວ ແລະ (2) ຊັບພະຍາກອນມະນຸດເພື່ອການພັດທະນາແບບຍືນຍົງ.

ສະເໜີຕໍ່ບັນດາທ່ານວ່າ, ໃນໄລຍະໜຶ່ງປີຜ່ານມາ ເຖິງແມ່ນວ່າ ສປປ ລາວ ຈະພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆ ເນື່ອງຈາກໄດ້ຮັບຜົນກະທົບຈາກການຜັນແປຢ່າງສັບສົນໃນທຸກດ້ານ ຂອງສະພາບສາກົນ-ພາກພື້ນ, ພາຍໃນປະເທດ ສືບຕໍ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດມະຫາພາກ, ຍ້ອນປະເຊີນກັບການແຜ່ລະບາດຂອງພະຍາດຕ່າງໆ ລວມທັງໄພທໍາມະຊາດ ແລະ ອື່ນໆ, ແຕ່ໂດຍພາຍໃຕ້ການນໍາພາ ຂອງສູນກາງພັກ, ການຕິດຕາມກວດກາຊຸກຍູ້ຢ່າງເປັນປະຈໍາ ຂອງສະພາແຫ່ງຊາດ ບວກກັບຄວາມພະຍາຍາມຢ່າງຕັ້ງໜ້າ ຂອງລັດຖະບານ, ອົງການປົກຄອງທຸກຂັ້ນ ແລະ ການປະກອບສ່ວນ ຂອງທຸກພາກສ່ວນ. ນອກຈາກນີ້ການຊ່ວຍເຫຼືອທາງການ ເພື່ອການພັດທະນາ ຫຼື ODA ທາງດ້ານງົບປະມານ ລວມທັງການສະໜັບສະໜູນ ແລະ ການຮ່ວມມືເປັນຢ່າງດີຈາກຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຕ່າງໆ ມີບົດບາດສໍາຄັນ ໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ບົນພື້ນຖານບັນດາປັດໃຈດັ່ງກ່າວຂ້າງເທິງນັ້ນ ແມ່ນໄດ້ເຮັດໃຫ້ ສປປ ລາວ ສືບຕໍ່ມີຄວາມສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຂອງສັງຄົມໄດ້ໂດຍພື້ນຖານ, ເສດຖະກິດຂະຫຍາຍຕົວ 4,2%, ຊີວິດການເປັນຢູ່ ຂອງປະຊາຊົນກໍ່ໄດ້ຮັບການແກ້ໄຂໃຫ້ດີຂຶ້ນເປັນກ້າວໆ.

ກອງປະຊຸມໃນຄັ້ງນີ້ ຍັງໄດ້ຮັບຟັງການປະກອບຄໍາເຫັນ ຂອງ **ທ່ານ ບັກໂຕເດັຍ ເບີຄະນ໋ອຟ, ຜູ້ປະສານງານອົງການ ສປຊ ປະຈໍາ ສປປ ລາວ**, ບັນດາທ່ານ ເອກອັກຄະລະຖະທູດ, ບັນດາທ່ານຫົວໜ້າອົງການຈັດຕັ້ງສາກົນທີ່ເຕັມໄປດ້ວຍເນື້ອໃນສໍາຄັນຫຼາຍ, ຊຶ່ງນອກຈາກສະໜັບສະໜູນການສະເໜີເອກະສານຂອງພາກສ່ນກ່ຽວຂ້ອງ ຂອງ ສປປ ລາວ ແລ້ວຍັງໄດ້ສະເໜີແນະວິທີການ, ມາດຕະການຫຼາຍຢ່າງ ໃນການຈັດຕັ້ງປະຕິບັດຕົວຈິງໃນຕໍ່ໜ້າ, ຊຶ່ງແຕ່ລະພາກສ່ວນ ຂອງ ສປປ ລາວ ຈະໄດ້ສືບຕໍ່ໄປຄົ້ນຄວ້າປຶກສາຫາລືກັນອັນລະອຽດຕື່ມ ເພື່ອນໍາໄປຈັດຕັ້ງປະຕິບັດຕົວຈິງໃຫ້ຖືກຕ້ອງ ແລະມີປະສິດທິຜົນຍິ່ງໆຂຶ້ນ.

ຜ່ານການສົນທະນາໃນມື້ນີ້, ຂ້າພະເຈົ້າເຫັນວ່າ ລັດຖະບານ ຈະຕ້ອງໄດ້ສືບຕໍ່ຄົ້ນຄ້ວາ ແລະສຸມໃສ່ບາງວຽກງານບູລິມະສິດດັ່ງນີ້:

1. ຕ້ອງໄດ້ສຸມໃສ່ພັດທະນາທຸກທ່າແຮງບົ່ມຊ້ອນຂອງ ສປປລາວ ລວມທັງການຜະລິດກະສິກໍາ, ພະລັງງານບໍ່ແຮ່, ການປຸງແຕ່ງ, ການບໍລິການຕາມທິດເປັນມິດກັບສິ່ງແວດລ້ອມ;

2. ສືບຕໍ່ເອົາໃຈໃສ່ປະຕິບັດມາດຕະການຕ່າງໆ ເພື່ອຂະຫຍາຍຖານລາຍຮັບຕິດພັນກັບອັດສ່ອງວ່າງການຮົ່ວໄຫຼ: ປັບປຸງກົນໄກການຄຸ້ມຄອງການເງິນແຫ່ງລັດ ໂດຍສະເພາະການເກັບລາຍຮັບ ໂດຍຜ່ານການຫັນເປັນທັນສະໄໝໃຫ້ນັບມື້ທົ່ວເຖິງ;
3. ສືບຕໍ່ກວດກາ ແລະ ປັບປຸງຄືນດ້ານລະບອບ, ລະບຽບການຕ່າງໆ ເພື່ອຮັບໃຊ້ແກ່ການຄຸ້ມຄອງຂອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ລວມທັງການສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການດຶງດູດການລົງທຶນ ໂດຍສຸມໃສ່ການເລືອເຟັ້ນການລົງທຶນທີ່ຄຸນນະພາບຈາກຕ່າງປະເທດ;
4. ພັດທະນາຊັບພະຍາກອນມະນຸດ ເພື່ອເປັນພື້ນຖານ ໃຫ້ແກ່ການຂັບເຄື່ອນການຫັນປ່ຽນດ້ານເສດຖະກິດ ໃຫ້ມີຄວາມຍືນຍົງ ດ້ວຍການຈັດສັນງົບປະມານທີ່ສົມເຫດສົມຜົນຕາມເງື່ອນໄຂຄວາມສາມາດຂອງລັດຖະບານໃນແຕ່ລະປີ;
5. ສືບຕໍ່ລະດົມແຫຼ່ງທຶນເພີ່ມເຕີມຈາກພາຍໃນ ແລະ ຕ່າງປະເທດ, ພ້ອມທັງໃຫ້ພາກເອກະຊົນມີສ່ວນຮ່ວມໃນການພັດທະນາ ເພື່ອການສະໜອງທຶນແບບຍືນຍົງໃຫ້ແກ່ການພັດທະນາທຶນມະນຸດ.

ບົນພື້ນຖານການຮັບຟັງການລາຍງານ ແລະ ປະກອບຄໍາຄິດຄໍາເຫັນດັ່ງທີ່ໄດ້ກ່າວມາຂ້າງເທິງໃນຕະຫຼອດໄລຍະໜຶ່ງວັນທີ່ຜ່ານມາ, ຂ້າພະເຈົ້າ ຂໍສັງລວມຄວາມເຫັນທີ່ເປັນເອກະພາບກັນ ຂອງກອງປະຊຸມໃນບາງຈຸດຕື່ມ ດັ່ງນີ້:

1. ພວກເຮົາຈະໄດ້ພ້ອມກັນ ຮັບຮູ້ສະພາບ, ຜົນໄດ້ຮັບ ແລະ ບັນຫາທີ່ຕັ້ງຂຶ້ນໃນຂົງເຂດວຽກງານຕ່າງໆ ໃນກາງສະໄໝຜ່ານມາ ທັງໄດ້ເອກະພາບກັນວ່າຕ້ອງໄດ້ສືບຕໍ່ເລັ່ງຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ສໍາລັບປີ 2024 ແລະ ວາລະແຫ່ງຊາດໃຫ້ສໍາເລັດຕາມຄາດໝາຍທີ່ສະພາແຫ່ງຊາດໄດ້ຮັບຮອງ;
2. ສືບຕໍ່ເຊື່ອມສານບັນດາເປົ້າໝາຍການພັດທະນາແບບຍືນຍົງ ແລະ ການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈໍາປີ 2024 ແລະ ສູ້ຊົນ ເພື່ອບັນລຸເປົ້າໝາຍພັດທະນາແບບຍືນຍົງ ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2026 ດ້ວຍການສຸມງົບປະມານທີ່ມີ ເພື່ອພັດທະນາຊັບພະຍາກອນມະນຸດທີ່ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ, ເພີ່ມທະວີການຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ແລະລະບຽບການຕ່າງໆຢ່າງເຂັ້ມງວດ, ພະຍາຍາມສຸມທຸກຄວາມສາມາດ ເພື່ອຫຼຸດຜ່ອນຄວາມແຕກໂຕນ ຂອງການພັດທະນາ ລະຫວ່າງ ຕົວເມືອງ ແລະຊົນນະບົດ, ລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ແລະ ເພື່ອແກ້ໄຂຄວາມທຸກຍາກ ແລະ ສ້າງຂີດຄວາມສາມາດໃນການແຂ່ງຂັນຂອງພາກທຸລະກິດພາຍໃນ ດ້ວຍການສ້າງສະພາບແວດລ້ອມການດໍາເນີນທຸລະກິດທີ່ເອື້ອອໍານວຍໃຫ້ດີຂຶ້ນ;
3. ເພີ່ມຄວາມເອົາໃຈໃສ່ໃນການຊຸກຍູ້ການຈັດຕັ້ງປະຕິບັດຍຸດທະສາດການເງິນ ເພື່ອສະ ໜັບສະໜູນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX;

4. ຕັ້ງໜ້າຈັດຕັ້ງຜັນຂະຫຍາຍ ຂອບການຟື້ນຟູເສດຖະກິດ ຂອງ ສປປ ລາວ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້;
5. ພະຍາຍາມຍົກລະດັບການກະກຽມຄວາມພ້ອມດ້ານຕ່າງໆ ໃນການຮັບມືກັບໄພພິບັດທາງທຳມະຊາດ, ດ້ວຍການສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ, ການປັບປຸງລະບົບການເຕືອນໄພລ່ວງໜ້າ, ການສຶກສາຄວາມສ່ຽງ ແລະ ການສ້າງແຜນຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ເອົາໃຈໃສ່ໃຫ້ຊ່ວຍເຫຼືອແກ່ຊຸມຊົນທີ່ມີຄວາມສ່ຽງສູງ;
6. ສືບຕໍ່ເພີ່ມທະວີສູ້ຊົນ, ໃຫ້ບູລິມາສິດ ແລະ ຮັບປະກັນການນໍາໃຊ້ຂໍ້ມູນຈາກການສໍາຫລວດພົນລະເມືອງ ແລະ ທີ່ຢູ່ອາໃສ ຄັ້ງທີ 5 ປີ 2025 ຂອງ ສປປລາວ ແລະ ການສໍາຫຼວດດັດຊະນີໝາຍສັງຄົມລາວ (LSIS) ເຂົ້າໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 10 (2026-2030) ໂດຍສະເພາະ ເຂົ້າໃນນະໂຍບາຍ ແລະແຜນບູລິມາສິດ ຂອງຂະແໜງການ ແລະ ທ້ອງຖິ່ນ.

ສະຫຼຸບແລ້ວ ໃນປີ 2024 ສປປ ລາວ ພວກເຮົາຈະມີວຽກງານຫລາຍຢ່າງ ທີ່ຈະຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດ, ໃນນີ້ລວມທັງວຽກງານທີ່ເປັນບູລິມະສິດ ທ້າຍສະໃໝ ຂອງ ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ການສືບຕໍ່ຈັດຕັ້ງປະຕິບັດ ສອງວາລະແຫ່ງຊາດຂອງລັດຖະບານ, ການເປັນເຈົ້າພາບ ກອງປະຊຸມສຸດຍອດອາຊຽນ ແລະ ວຽກງານຕ່າງທີ່ເປັນພັນທະຕໍ່ສາກົນໃນລະດັບສອງຝ່າຍ ແລະ ຫຼາຍຝ່າຍ ເຊິ່ງໜ້າວຽກດັ່ງກ່າວນັ້ນບໍ່ສາມາດຈັດຕັ້ງປະຕິບັດໄດ້ລໍາພັງ ແຕ່ ສປປ ລາວ ເອງ, ຫາກບໍ່ໄດ້ຮັບການເຂົ້າຮ່ວມຢ່າງເອົາຈິງເອົາຈັງຂອງທຸກພາກສ່ວນ, ໂດຍສະເພາະການເຂົ້າຮ່ວມຢ່າງສະເໝີຕົ້ນສະເໝີປາຍຂອງຄູ່ຮ່ວມພັດທະນາກໍ່ຄື ຂອງອົງການຈັດຕັ້ງສາກົນຕ່າງໆ.

**ບັນດາທ່ານ ທີ່ນັບຖື ແລະ ຮັກແພງທັງຫຼາຍ !**

ຜົນສໍາເລັດຂອງກອງປະຊຸມປຶກສາຫາລືໃນຄັ້ງນີ້, ກະຊວງແຜນການ ແລະ ການລົງທຶນ ໃນນາມຜູ້ປະຈໍາການຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນຈະສົມທົບກັບພາກສ່ວນກ່ຽວຂ້ອງສັງລວມ ແລະ ລາຍງານລັດຖະບານ ສປປລາວ ເພື່ອໃຫ້ມີທິດຊີ້ນໍາ ທັງເປັນບ່ອນອີງໃຫ້ທຸກພາກສ່ວນຈັດຕັ້ງປະຕິບັດຕາມພາລະບົດບາດ ແລະ ສິດໜ້າທີ່ຂອງຕົນ. ສະນັ້ນ ຖືໂອກາດນີ້, ຂ້າພະເຈົ້າໃນນາມຜູ້ປະຈໍາການ ຄະນະຊີ້ນໍາລະດັບຊາດ ກ່ຽວກັບວຽກດັ່ງກ່າວ ຈຶ່ງຂໍຮຽກຮ້ອງມາຍັງບັນດາກະຊວງ, ອົງການກ່ຽວຂ້ອງ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ, ບັນດາຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມຈົ່ງໄດ້ສືບຕໍ່ຍົກສູງຄວາມຮັບຜິດຊອບ, ຄວາມເປັນເຈົ້າການ, ເພີ່ມທະວີການປະສານງານສົມທົບເຊິ່ງກັນ ແລະ ກັນຢ່າງກົມກຽວ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕົວຈິງໃຫ້ມີປະສິດທິຜົນ, ທັງນີ້ ກໍ່ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ທ້າຍສະໃໝ, ວາລະແຫ່ງ

ຊາດຂອງລັດຖະບານ, ວາລະການພັດທະນາ 2030 ແລະພັນທະສາກົນຕ່າງໆທີ່ ສປປ ລາວ ເປັນພາຄີໃຫ້ບັນລຸຕາມຄາດໝາຍທີ່ໄດ້ວາງໄວ້.

ໃນໂອກາດທີ່ມີຄວາມໝາຍຄວາມສຳຄັນນີ້, ອີກເທື່ອໜຶ່ງ ຕາງໜ້າໃຫ້ລັດຖະບານ ສປປ ລາວ ກໍ່ຄືປະຊາຊົນລາວບັນດາເຜົ່າ ຂໍສະແດງຄວາມຂອບອົກຂອບໃຈ ແລະ ຮູ້ບຸນຄຸນ ມາຍັງບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ ທີ່ໄດ້ໃຫ້ການສະໜັບສະໜູນ ທາງດ້ານງົບປະມານ ແລະ ເຕັກນິກວິຊາການ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ກໍ່ຄືຄາດໝາຍຕ່າງໆ ທີ່ໄດ້ເອກະພາບກັບຄູ່ຮ່ວມພັດທະນາໃນແຕ່ລະໄລຍະ ແລະ ໃນກອງປະຊຸມຄັ້ງນີ້ ຄູ່ຮ່ວມພັດທະນາ ແລະອົງການຈັດຕັ້ງສາກົນ ປະຈຳ ສປປລາວຕ່າງໆ ລ້ວນແຕ່ໃຫ້ຄຳໝາຍໝັ້ນວ່າຈະສືບຕໍ່ສະໜັບສະໜູນ ສປປລາວ ໃນປີ 2024 ຕື່ມອີກ. ຫວັງຢ່າງຍິ່ງວ່າທຸກພາກສ່ວນ ຈະສືບຕໍ່ຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງພວກເຮົາຕະຫລອດໄປ.

ທ້າຍສຸດນີ້, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ບັນດາທ່ານ ສື່ມວນຊົນທີ່ໄດ້ເຂົ້າຮ່ວມພິທີຖະແຫຼງຂ່າວ ແລະ ຫວັງວ່າບັນດາທ່ານ ຈະໄດ້ນຳເອົາຜົນ ຂອງກອງປະຊຸມໂຕະມົນ 2023 ໃນຄັ້ງນີ້ ໄປເຜີຍແຜ່ອະທິບາຍ ໃຫ້ປະຊາຊົນບັນດາເຜົ່າທົ່ວປະເທດໄດ້ຮັບຊາບຢ່າງທົ່ວເຖິງກັນ ເພື່ອໃຫ້ທົ່ວປວງຊົນ ສືບຕໍ່ເຂົ້າຮ່ວມໃນຂະບວນການປະຕິບັດຕົວຈິງ ໃຫ້ມີປະສິດທິພາບ ປະສິດທິຜົນ ເປັນກ້າວໆ.

ຂໍອວຍພອນໃຫ້ບັນດາທ່ານ ທຸກພາກສ່ວນ, ທຸກຂັ້ນ ຕະຫລອດຮອດຜູ້ຟັງ, ຜູ້ຊົມທັງຫລາຍ ຈົ່ງມີສຸຂະພາບເຂັ້ມແຂງ ມີຜົນສຳເລັດໃນໜ້າທີ່ການງານ ທຸກປະການ

**(ຂໍຂອບໃຈ)**